ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ເຜີຍແຜ່ຕ້ານການຟອກເງິນໃຫ້ກຸ່ມອະສັງຫາລິມະຊັບ




ສຳນັກງານຂໍ້ມູນຕ້ານການຟອກເງິນໄດ້ຈັດການເຜີຍແຜ່ວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍໃນວັນທີ 28 ມັງກອນ 2021 ທີ່ສະຖາບັນການທະນາຄານໂດຍມີທ່ານນາງ ຂັນທະລີ ວົງໄຊຍະລາດ ຮອງຫົວໜ້າສຳນັກງານຂໍ້ມູນຕ້ານການຟອກເງິນ (ສຕຟງ); ພ້ອມນີ້, ກໍ່ມີບັນດາກົມກ່ຽວຂ້ອງ ທຫລ, ພະນັກງານຈາກກົມທີ່ດິນ, ສຕຟງ ແລະ ຜູ້ຕາງໜ້າຈາກບໍລິສັດຕົວແທນຊື້ຂາຍອະສັງຫາລິມະຊັບ ທັງນີ້ກໍ່ເພື່ອສ້າງຄວາມຮັບຮູ້ໃນການຈັດຕັ້ງປະຕິບັດວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ; ການປະເມີນຄວາມສ່ຽງ ຕາມຫຼັກການບໍລິຫານຄວາມສ່ຽງ (RBA) ດ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ກົນໄກການປະສານງານລະຫວ່າງເຈົ້າໜ້າທີ່ກັບຂະແໜງການອະສັງຫາລິມະຊັບເພື່ອໃຫ້ບໍລິສັດອະສັງຫາລິມະຊັບສະໜອງຂໍ້ມູນຮີບດ່ວນ ເພື່ອນຳໄປເຮັດການປະເມີນຕາມຫຼັກການບໍລິຫານຄວາມສ່ຽງ.

ວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເປັນວຽກງານທີ່ມີຄວາມສຳຄັນຕໍ່ສະພາບ ການດຳເນີນເສດຖະກິດໃນປະເທດ, ສປປ ລາວ ກໍ່ຄືລັດຖະບານໄດ້ເຫັນຄວາມສຳຄັນ ແລະ ສ້າງຕັ້ງຄະນະກຳມະການລະດັບຊາດຂຶ້ນ ໂດຍມີຮອງນາຍົກລັດຖະມົນຕີເປັນປະທານ, ມີການນຳລະດັບສູງຂອງລັດຖະບານ 13 ກະຊວງ ແລະ ທຽບເທົ່າເປັນຄະນະ ເພື່ອສຸມໃສ່ຈັດຕັ້ງປະຕິບັດວຽກງານດັ່ງກ່າວ ບົນພື້ນຖານເງື່ອນໄຂ 40 ຂໍ້ແນະນຳຂອງສາກົນທີ່ ສປປ ລາວ ເປັນພາຄີ ແລະ ແບ່ງອອກເປັນ 4 ກຸ່ມວຽກຄື: ວຽກງານເຜີຍແຜ່ ແລະ ເຊື່ອມຊຶມ, ວຽກງານນິຕິກຳ ແລະ ກົນໄກ, ວຽກງານຄຸ້ມຄອງ ແລະ ວຽກງານການດຳເນີນຄະດີ.

ໃນໄລຍະຜ່ານມາ ສປປ ລາວ ໄດ້ຮັບການປະເມີນຜົນຮອບດ້ານຄັ້ງທຳອິດ ໃນປີ 2010 ຊຶ່ງຜົນການປະເມີນໃນຄັ້ງນັ້ນ ສປປ ລາວ ແມ່ນຕົກຢູ່ໃນບັນຊີເທົາ ເຮັດໃຫ້ ສປປ ລາວ ພົບຄວາມຫຍຸ້ງຍາກຫຼາຍດ້ານ. ເຖິງຢ່າງໃດກໍດີ, ສປປ ລາວ ໄດ້ສູ້ຊົນ, ປັບປຸງແກ້ໄຂຂໍ້ຄົງຄ້າງຕ່າງໆ ເປັນຕົ້ນອອກບັນດານິຕິກຳທີ່ຕິດພັນ 24 ສະບັບ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານຕ້ານການຟອກເງິນໃຫ້ສອດຄ່ອງຕາມມາດຖານສາກົນ, ສ້າງກົນໄກ ແລະ ຂັ້ນຕອນຕ່າງໆ ເພື່ອນຳໄປປະຕິບັດໃຫ້ເກີດປະສິດທິຜົນຕາມນິຕິກຳທີ່ວາງອອກໄດ້ຈຳນວນໜຶ່ງ ຈຶ່ງເຮັດໃຫ້ ສປປ ລາວ ສາມາດອອກຈາກບັນຊີເທົາຂອງສາກົນໃນປີ 2017. ຫຼັງຈາກນັ້ນ, ໄດ້ດຳເນີນການປະເມີນຄວາມສ່ຽງລະດັບຊາດດ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສຳເລັດໃນກາງປີ 2018 ຊຶ່ງສາມາດກຳນົດໄດ້ໄພຂົ່ມຂູ່ຂອງການຟອກເງິນ, ຂະແໜງການທຸລະກິດທີ່ມີຄວາມສ່ຽງຈະຖືກສວຍໃຊ້ໃນຂະບວນການຟອກເງິນ ແລະ ເລັ່ງແກ້ໄຂຂໍ້ຄົງຄ້າງທີ່

ໄດ້ຈາກຜົນການປະເມີນ ເພື່ອປັບປຸງປະສິດທິພາບຂອງການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ສອດຄ່ອງ ແລະ ຮັບປະກັນໄດ້ຕາມມາດຖານສາກົນຍິ່ງຂຶ້ນ.

ເພື່ອກະກຽມຄວາມພ້ອມໃຫ້ແກ່ການປະເມີນຜົນຮອບດ້ານ ຄັ້ງທີ 2 ໃນສົກປີ 2020-2021, ລັດຖະບານໄດ້ສ້າງຕັ້ງຄະນະສະເພາະກິດ ຊຶ່ງນຳໂດຍຮອງນາຍົກລັດຖະມົນຕີ ແລະ ຮອງລັດຖະມົນຕີ 25 ຄົນປະກອບຢູ່ໃນຄະນະກຳມະການໃນນັ້ນ, ສຳລັບກຸ່ມວຽກງານຄຸ້ມຄອງ ລວມມີຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ, ກະຊວງແຜນການ ແລະ ການລົງທຶນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງອຸດສະຫະກຳ ແລະ ການຄ້າ ແລະ ກົມກອງທີ່ກ່ຽວຂ້ອງປະກອບຢູ່ໃນຄະນະ ຊຶ່ງມີສຳນັກງານຂໍ້ມູນຕ້ານການຟອກເງິນເປັນກອງເລຂາ ເຮັດວຽກໃນການປະສານງານ.

**#ຂ່າວໂດຍ: ຣັດສະໝີ ດວງສັດຈະ**